ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 226 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 20 ມີນາ 2020

# ຂໍ້ຕົກລົງ
# ວ່າດ້ວຍການປັບຫຼຸດອັດຕາສ່ວນເງິນແຮຝາກບັງຄັບ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018;
- ອີງຕາມຂໍ້ຕົກລົງວ່າດ້ວຍການປັບປຸງຫຼັກການຮັກສາລະດັບເງິນແຮຝາກບັງຄັບ ສະບັບເລກທີ 557/ທຫລ, ລົງວັນທີ 17/07/2018.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ເພື່ອປັບຫຼຸດອັດສ່ວນເງິນແຮຝາກບັງຄັບຂອງທະນາຄານທຸລະກິດທີ່ມີພັນທະຈັດຕັ້ງປະຕິບັດເງິນແຮຝາກບັງຄັບຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ ທີ່ກຳນົດອອກ.

**ມາດຕາ 2 ປັບຫຼຸດອັດຕາສ່ວນເງິນແຮຝາກບັງຄັບ ດັ່ງນີ້:**

1. ປັບຫຼຸດອັດຕາສ່ວນເງິນແຮຝາກບັງຄັບສະກຸນເງິນກີບ ຈາກ 5% ມາເປັນ 4%;
2. ປັບຫຼຸດອັດຕາສ່ວນເງິນແຮຝາກບັງຄັບສະກຸນເງິນຕາຕ່າງປະເທດ ຈາກ 10% ມາເປັນ 8%.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ໃຫ້ທະນາຄານທຸລະກິດທີ່ມີພັນທະຈັດຕັ້ງປະຕິບັດເງິນແຮຝາກບັງຄັບຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ, ກົມບໍລິການທະນາຄານ, ກົມບັນຊີແລະການເງິນ, ກົມຄຸ້ມຄອງທະນາຄານທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4  ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 02/04/2020 ເປັນຕົ້ນໄປ  ແລະ ບັນດານິຕິກຳອື່ນທີ່ ທຫລ ໄດ້ອອກກ່ອນໜ້ານີ້ທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແລ້ວແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ສອນໄຊ ສິດພະໄຊ